ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===-----------

ກະຊວງການເງິນ

ເລກທີ: 1434 /ກງ.

ນະຄອນຫຼວງວຽງຈັນ, ວັນທີ 14 MAY 2018

## ແຈ້ງການ

ເຖິງ: ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາ ບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017).**

- ອີງຕາມ ກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018 ວ່າດ້ວຍການປະກາດໃຊ້ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017);
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 2929/ກງ, ລົງວັນທີ 31 ສິງຫາ 2017;
- ອີງຕາມ ໃບສະເໜີຂອງ ກົມພາສີ ສະບັບເລກທີ 02090/ກພສ, ລົງວັນທີ 04/05/2018.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍເນື້ອໃນຂອງ ດຳລັດວ່າດ້ວຍການປະກາດໃຊ້ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (ASEAN Harmonized Tariff Nomenclature ~ AHTN 2017) ໃຫ້ສອດຄ່ອງກັບລະບຽບການສາກົນ ແນໃສ່ເປັນການອຳນວຍຄວາມສະດວກທາງດ້ານການຄ້າ ດ້ວຍການຮັບປະກັນຄວາມຖືກຕ້ອງ ຊັດເຈນ ແລະ ເປັນເອກະພາບກັນໃນການຈັດລະຫັດສິນຄ້າ, ເຄື່ອງຂອງ ໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ,

**ກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017) ແມ່ນໃຊ້ປ່ຽນແທນສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2012 (AHTN 2012);
2. ສາລະບານສິນຄ້າບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017) ປະກອບມີ 21 ພາກ, 97 ໝວດ (ໃນນີ້ໝວດທີ 77 ແມ່ນຖືກສະຫງວນໄວ້ໃຊ້ໃນອະນາຄົດ), 1,222 ລະຫັດເຄົ້າ (04 ຕົວເລກ), 5,387 ລະຫັດຍ່ອຍ (06 ຕົວເລກ) ແລະ 10,813 ລະຫັດຍ່ອຍ (08 ຕົວເລກ);
3. ມອບໃຫ້ກົມພາສີອອກປຶດແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 AHTN 2017 ພ້ອມທັງຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ເຂົ້າໃຈ;
4. ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017) ມີຜົນບັງຄັບໃຊ້ນັບແຕ່ ວັນທີ 01 ກໍລະກົດ 2018 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ